**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ

ເລກທີ 1160 / ສສກ

ນະຄອນຫຼວງວຽງຈັນ, ວັນທີ 3 ທັນວາ 2021

# ແຈ້ງການ

ເຖິງ: - ທ່ານ ຫົວໜ້າກົມ ກິລາ ລະດັບສູງ.

- ທ່ານ ຫົວໜ້າກົມ ກິລາມວນຊົນ, ພະລະ ແລະ ສິລະປະສຶກສາ.
- ທ່ານ ປະທານ ຄະນະກຳມະການໂອແລມປິກແຫ່ງຊາດລາວ.
- ທ່ານ ປະທານ ຄະນະກຳມະການພາຣາແລມປິກແຫ່ງຊາດລາວ.
- ທ່ານ ປະທານ ສະຫະພັນກິລາແຫ່ງຊາດປະເພດຕ່າງໆ.

ເລື່ອງ: ການປະກາດໃຊ້ກົດລະບຽບກ່ຽວກັບ ວ່າດ້ວຍຕ້ານການໃຊ້ສານຕ້ອງຫ້າມໃນກິລາແຫ່ງຊາດລາວ ສະບັບປີ 2021 ( Lao National Anti Doping Rules ).

- ອີງຕາມ ການລົງນາມສົນທິສັນຍາສາກົນວ່າດ້ວຍ ຕ້ານການໃຊ້ສານຕ້ອງຫ້າມໃນກິລາຂອງ ສປປ ລາວ ຕໍ່ອົງການ ອຸຍແນສະໂກ (Ratification of UNESCO on Anti-Doping in Sport) ໃນປີ 2016.
- ອີງຕາມ ໜ້າທີ່ຂອງລັດຖະບານ ໃນການຈັດຕັ້ງປະຕິບັດກົດລະບຽບຕ້ານການໃຊ້ສານຕ້ອງຫ້າມໂລກ (2021CODE) ສະບັບຄັ້ງວັນທີ 1 ພຶດສະພາ 2020.
- ອີງຕາມ ພັນທະຂອງການເປັນສະມາຊິກອົງການຕ້ານສານຕ້ອງຫ້າມໂລກໃນການຈັດຕັ້ງປະຕິບັດລະບຽບວ່າດ້ວຍການຕ້ານການໃຊ້ສານຕ້ອງຫ້າມໂລກ ປີ2021 (2021CODE).

ກະຊວງສຶກສາທິການ ແລະ ກິລາ ຂໍແຈ້ງມາຍັງທ່ານ ເພື່ອນຳໃຊ້ກົດລະບຽບວ່າດ້ວຍ ຕ້ານການໃຊ້ສານຕ້ອງຫ້າມໃນກິລາ ສະບັບປີ 2021 ເລີ່ມແຕ່ວັນທີ 01 /12/ 2021 ເປັນເວລາຢ່າງໜ້ອຍ 4ປີ ຈົນກວ່າຈະມີການປ່ຽນແປງໃໝ່.

ສະນັ້ນ, ເພື່ອເປັນການປະຕິບັດໃຫ້ຖືກຕ້ອງຕາມລະບຽບການຂອງສາກົນ, ກະຊວງສຶກສາທິການ ແລະ ກິລາ ຈຶ່ງແຈ້ງມາຍັງບັນດາສະຫະພັນກິລາແຫ່ງຊາດປະເພດຕ່າງໆ ແລະ ພາກສ່ວນທີ່ກ່ຽວຂ້ອງທີ່ໄດ້ມີການເຄື່ອນໄຫວໃນຂົງເຂດວຽກກິລາ-ກາຍຍະກຳ ຈຶ່ງໄດ້ເຊັນໜັງສືຮັບຮອງຂອງພາກສ່ວນຕົນໃນການການຮັບຮູ້ ແລະ ເຫັນດີຕໍ່ກັບກົດລະບຽບດັ່ງກ່າວ ແລະ ເພື່ອເປັນບ່ອນອີງໃນການ ຈັດຕັ້ງປະຕິບັດກົດລະບຽບດັ່ງກ່າວ ໃຫ້ມີປະສິດທິພາບສູງພ້ອມທັງໃຫ້ສອດຄ່ອງກັບກົດລະບຽບຂອງສາກົນວາງອອກ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ເລີ່ມຈັດຕັ້ງປະຕິບັດ ນັບແຕ່ມື້ໄດ້ຮັບແຈ້ງການນີ້ເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງສຶກສາທິການ ແລະ ກິລາ

ລັດຖະມົນຕີ

ຮສ.ປອ ພຸດ ສິມມາລາວົງ

ບ່ອນນຳສົ່ງ:

| | |
|---|---|
| - ກົມກິລາ ລະດັບສູງ | 1 ສະບັບ |
| - ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ | 1 ສະບັບ |
| - ຄະນະກຳມະການໂອແລມປິກແຫ່ງຊາດລາວ | 1 ສະບັບ |
| - ຄະນະກຳມະການພາຣາແລມປິກແຫ່ງຊາດລາວ | 1 ສະບັບ |
| - ບັນດາສະຫະພັນກິລາແຫ່ງຊາດ ປະເພດຕ່າງໆ ພາກສ່ວນລະ | 1 ສະບັບ |
| - ສຳເນົາ | 3 ສະບັບ |

**Lao People's Democratic Republic**
**Peace Independence Democracy Unity Prosperity**

Ministry of Education and Sports

Ref. No.: 1159 ........ /MOES
Vientiane Capital, ...3....December 2021

## Promulgation on
## Lao National Anti-Doping in Sports Rules 2021

- Pursuant to the code of World Anti-Doping Code (WADC) 2021
- Pursuant to the Physical Sports Law 2020 of Lao PDR, Chapter VI, (Article 92, 93, 94 & 95)

Ministry of Education and Sports promulgate the Lao National Anti-Doping in Sports Rules 2021 for promoting the cleanness, transparency and fairness of the physical sport activities. The Athletes, Sport Administrators, Sport Associations, Judges, Coaches and all parties involved in sport activities shall cooperate with the Lao National Anti-Doping Office in strict and effective implementation of the National Anti-Doping Rules 2021.

The Lao National Anti-Doping in Sports Rules 2021 is effective from the day of its signing.

**Assoc. Prof. Dr. Phout SIMMALAVONG**
Minister
Ministry of Education and Sports